2982

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຄັງເງິນແຫ່ງລັດ

ເລກທີ 2982 /ຄງລ
ນະຄອນຫຼວງວຽງຈັນ, ວັນທີ 29 ຕຸລາ 2026

ໜັງສືແຈ້ງເຊີນປະມູນ

1. ຄັງເງິນແຫ່ງລັດ ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບວ່າ ປະຈຸບັນຄັງເງິນແຫ່ງລັດ ໄດ້ມີແຜນການຈັດຊື້ ຄອມພິວເຕີໂນດບຸກ ຮັບໃຊ້ວຽກງານວິຊາສະເພາະ ຂອງຂະແໜງຄັງເງິນ ປະຈຳປີ 2026;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິທີ່ເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນການປະມູນ ສາມາດຕິດຕໍ່ພົວພັນເອົາເອກະສານປະມູນໄດ້ທີ່ ຄັງເງິນແຫ່ງລັດ (ຕຶກ A ຊັ້ນໜຶ່ງ) ເບີໂທຕິດຕໍ່ : (856-20) 9779 5151, 2234 6882;
4. ເອກະສານປະມູນເລີ່ມຂາຍແຕ່ 28 ຕຸລາ 2026 ຫາ 11 ພະຈິກ 2026. ໃນລາຄາ 3,000,000 ກີບ/ຊອງ, ວິທີການຊຳລະເປັນເງິນສົດ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 11 ພະຈິກ 2026. ຊອງປະມູນທຸກໆຊອງ ຈະໄດ້ເປີດໃນວັນທີ 11 ພະຈິກ 2026 ເວລາ 09:00ໂມງ ທີ່ຫ້ອງປະຊຸມຄັງເງິນແຫ່ງລັດ (ຕຶກ A) ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດຊອງ;
6. ທຸກຊອງປະມູນຕ້ອງມີໜັງສືຄ້ຳປະກັນການປະມູນຈາກທະນາຄານ, ແຊັກ (VISA) ຫຼື ເງິນສົດ ຊຶ່ງມີມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄອນດ້ວຍ.

ຫົວໜ້າຄັງເງິນແຫ່ງລັດ

ນ. ບົວເລິງຄົນ ດວງສະຫວັນ